ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ແຈ້ງຂ່າວການຈຳໜ່າຍພັນທະບັດສະກຸນເງິນກີບ




ໃນຕອນບ່າຍຂອງວັນຈັນທີ 13 ມິຖຸນາ 2022 ທີ່ຫ້ອງປະຊຸມຊັ້ນ VI ສຳນັກງານທະນາຄານແຫ່ງ ສປປ ລາວ (ທຫລ) ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ໄດ້ແຈ້ງໃຫ້ຮູ້ກ່ຽວກັບການຈຳໜ່າຍພັນທະບັດ ທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ (ງວດທີ 1 ຄັ້ງວັນທີ 15 ມິຖຸນາ 2022) ຢູ່ ທະນາຄານຕົວແທນ 9 ແຫ່ງ.

ອີງຕາມແຈ້ງການຂອງຫ້ອງການທະນາຄານແຫ່ງ ສປປ ລາວ ສະບັບເລກທີ 200/ຫກ ລົງວັນທີ 13 ມິຖຸນາ 2022 ເຊິ່ງມີເນື້ອໃນວ່າ: ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ຊາບວ່າ ນັບແຕ່ວັນທີ 15 ມິຖຸນາ 2022 ເປັນຕົ້ນໄປ ທະນາຄານແຫ່ງ ສປປ ລາວ ຈະໄດ້ເປີດຈຳໜ່າຍພັນທະບັດທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ງວດທີ 1 ໃນວົງເງິນຈຳໜ່າຍທັງໝົດ 5.000.000.000.000 ກີບ (ຫ້າພັນຕື້ກີບ). ຈຸດປະສົງໃນການອອກພັນທະບັດ ທຫລ ສະກຸນເງິນກີບ ໃນຄັ້ງນີ້ແມ່ນເພື່ອໃຫ້ທຸກຊັ້ນຄົນໃນສັງຄົມໄດ້ມີໂອກາດລົງທຶນໃນປະເພດຫລັກຊັບທີ່ມີຄວາມໝັ້ນຄົງ ແລະ ປອດໄພທີ່ສຸດ ແລະ ໃຫ້ຜົນຕອບແທນທີ່ດີ, ພ້ອມທັງ ເປັນການຈັດຕັ້ງປະຕິບັດນະໂຍບາຍເງິນຕາ, ປະກອບສ່ວນໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ເພື່ອໃຫ້ບັນລຸໄດ້ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ກໍ່ຄືວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເງິນຕາຂອງປະເທດເຮົາ.

ການຈຳໜ່າຍພັນທະບັດ ທຫລ ໃນຄັ້ງນີ້ ໄດ້ດຳເນີນຜ່ານທະນາຄານທຸລະກິດ 9 ແຫ່ງ ທີ່ເປັນທະນາຄານຕົວແທນຈຳໜ່າຍ ດັ່ງລາຍຊື່ລຸ່ມນີ້:

1) ທະນາຄານ ການຄ້າຕ່າງປະເທດ ລາວ ມະຫາຊົນ;
2) ທະນາຄານ ພັດທະນາລາວ;
3) ທະນາຄານ ສົ່ງເສີມກະສິກຳ;
4) ທະນາຄານ ຮ່ວມພັດທະນາ;
5) ທະນາຄານ ພົງສະຫວັນ;
6) ທະນາຄານ ເອສທີ;
7) ທະນາຄານ BIC;
8) ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ;
9) ທະນາຄານອຸດສາຫະກຳ ແລະ ການຄ້າຈີນ (ICBC).

ພັນທະບັດ ທະນາຄານແຫ່ງ ສປປ ລາວ ທີ່ອອກຈຳໜ່າຍມີຄຸນລັກສະນະຕົ້ນຕໍ ດັ່ງນີ້:

- ຮູບແບບເອເລັກໂຕຼນິກ (ບໍ່ເປັນພັນທະບັດໃບເຈ້ຍ, Script less) ທີ່ມີການເກັບຮັກສາໄວ້ນຳ ສູນຮັບຝາກຫຼັກຊັບຂອງ ຕະຫຼາດຫຼັກຊັບລາວ. ຜູ້ຊື້ພັນທະບັດ ຈະໄດ້ຮັບໃບຢັ້ງຢືນການຖືຄອງພັນທະບັດ ຫຼື ເອີ້ນວ່າ (BOL Bill Certificate) ຈາກທະນາຄານທຸລະກິດທີ່ເປັນຕົວແທນຈຳໜ່າຍ (ແບບຕົວຢ່າງໄດ້ຄັດຕິດມາພ້ອມນີ້);
- ພັນທະບັດ ທຫລ ແມ່ນ ມີອາຍຸຄົບກຳນົດ 06 ເດືອນ, ບໍ່ສາມາດປ່ຽນມືໄດ້;
- ອັດຕາດອກເບ້ຍ 20% ຕໍ່ປີ, ຊຳລະດອກເບ້ຍ ແລະ ຕົ້ນທຶນຄັ້ງດຽວ ເມື່ອຄົບກຳນົດອາຍຸໄຖ່ຖອນ;
- ມູນຄ່າຈຳໜ່າຍພັນທະບັດຕ່ຳສຸດ ແມ່ນ 100.000 ກີບ (ໜຶ່ງແສນກີບ), ບຸກຄົນສາມາດຊື້ໄດ້ສູງສຸດບໍ່ເກີນ 2.000.000.000 ກີບ (ສອງຕື້ກີບ); ນິຕິບຸກຄົນສາມາດຊື້ໄດ້ສູງສຸດບໍ່ເກີນ 10.000.000.000 ກີບ (ສິບຕື້ກີບ);
- ຜູ້ມີເງື່ອນໄຂຊື້ພັນທະບັດ ແມ່ນບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີພູມລຳເນົາຢູ່ ສປປ ລາວ ນັບແຕ່ 1 ປີຂຶ້ນໄປ; ບໍ່ອະນຸຍາດໃຫ້ ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ທີ່ເຄື່ອນໄຫວທຸລະກິດຢູ່ ສປປ ລາວ ຊື້ພັນທະບັດດັ່ງກ່າວ;
- ໄລຍະເວລາຈຳໜ່າຍພັນທະບັດ ທຫລ: ນັບແຕ່ວັນທີ 15 ມິຖຸນາ 2022 ເປັນຕົ້ນໄປ, ຕາມເວລາໃຫ້ບໍລິການຂອງທະນາຄານທຸລະກິດ ທີ່ເປັນຕົວແທນຈຳໜ່າຍຢູ່ທຸກສາຂາ ແລະ ໜ່ວຍບໍລິການ ຂອງທະນາຄານຕົວແທນໃນຂອບເຂດທົ່ວປະເທດ.

ຂໍເຊີນຊວນບັນດາທ່ານຜູ້ທີ່ມີຄວາມສົນໃຈ ເຂົ້າມາພົວພັນນຳທະນາຄານທຸລະກິດທີ່ເປັນຕົວແທນຈຳໜ່າຍຕາມວັນເວລາດັ່ງກ່າວດ້ວຍ.

**#ຂ່າວ ແລະ ພາບ: ນາງ ປາໃນ ພົນທະລາ**

## ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ